ສະພາການແຫ່ງຊາດ ສ.ປ.ປ.ລາວ
ເລກທີ: 908
ວັນທີ: 17.5.2016
ໂທລະສັບ: 243710

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 100 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 13 ພຶດສະພາ 2016

ສຳນັກງານ ຄຄຊ
ເລກທີ 0477
ວັນທີ 19 MAY 2016
ໂທລະສັບ 021 217770

## ດຳລັດ
## ວ່າດ້ວຍການສ້າງຕັ້ງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 69/ຫສພ, ລົງວັນທີ 15 ມີນາ 2016 ກ່ຽວກັບທິດຊີ້ນຳຂອງກົມການເມືອງ ກ່ຽວກັບການສ້າງຕັ້ງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

**ນາຍົກລັດຖະມົນຕີ ອອກດຳລັດ:**

ມາດຕາ 1 ເຫັນດີສ້າງຕັ້ງສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດຂຶ້ນກັບລັດຖະບານ ໂດຍໂຮມເອົາໜ່ວຍງານຄົ້ນຄວ້າແຜນຍຸດທະສາດການພັດທະນາເສດຖະກິດ ທີ່ຂຶ້ນກັບຫ້ອງວ່າການສູນກາງພັກ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເຂົ້າເປັນອັນດຽວ.

ມາດຕາ 2 ມອບໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ສົມທົບກະຊວງພາຍໃນ ຄົ້ນຄວ້າກຳນົດຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໃຫ້ຮັດກຸມ, ຈະແຈ້ງ ແລະ ເໝາະສົມກັບສະພາບຂອງປະເທດເຮົາ ແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາ ໃນເວລາອັນຄວນ.

ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 3 ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ພາສີ ພົມມະກອນ